**Curriculum on Basic Skills in legal profession**
**for enforcement and court judgement (Laos)**

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

# Lecture 10
# Ethic of the enforcement and judgement staffs
# ຈັນຍາບັນຂອງພະນັກງານປະຕິບັດຄຳຕັດສິນຂອງສານ

## 1. ຄວາມໝາຍຈັນຍາບັນຕໍ່ວຽກງານປະຕິບັດຄຳຕັດສິນຂອງສານ

ຈັນຍາບັນ ແມ່ນການປະພຶດທີ່ດີຂອງຄົນເຮົາ ຊຶ່ງສະແດງເຖິງຄວາມຮັກ ແລະ ເຂົ້າລຶບວິຊາສະເພາະຂອງຕົນ ຫຼື ອົງການ, ສະຖາບັນບ່ອນທີ່ຕົນເຮັດວຽກ ຫຼື ສັງກັດຢູ່ ເຊັ່ນ: ຢູ່ໃນສັງຄົມ ມັກຈະປາກົດເຫັນເລື້ອຍໆ ວ່າມີຄົນຈຳນວນໜຶ່ງປະພຶດຕົນໄປໃນທາງທີ່ບໍ່ດີ, ລະເມີດລະບຽບກົດໝາຍ, ສະແຫວງຫາຜົນປະໂຫຍດໂດຍບໍ່ຊອບທຳ, ເຮັດໃຫ້ເສຍຊື່ສຽງຂອງຜູ້ກ່ຽວ ແລະ ສະຖາບັນຜູ້ກ່ຽວສັງກັດ, ການກະທຳດັ່ງກ່າວນີ້ເອງທີ່ເອີ້ນວ່າ ຂາດຈັນຍາບັນ ຫຼື ຄົນບໍ່ມີຈັນຍາບັນ.

ຈັນຍາບັນ ເປັນຄຳສັບທີ່ມາຈາກພາສາບາລີ ຊຶ່ງມີຄວາມໝາຍວ່າ ຫຼັກການປະພຶດ ທີ່ອົງການຈັດຕັ້ງວິຊາຊີບຕ່າງໆ ກຳນົດຂຶ້ນ ເພື່ອຮັກສາຊື່ສຽງ, ຖານະ ແລະ ກຽດສັກສີ, ຊຶ່ງອາດຂຽນເປັນລາຍລັກອັກສອນ ຫຼື ບໍ່ກໍໄດ້.

ຈັນຍາບັນວິຊາຊີບປະຕິບັດຄຳຕັດສິນຂອງສານ ແມ່ນຫຼັກການປະພຶດຂອງພະນັກງານປະຕິບັດຄຳຕັດສິນຂອງສານ ທີ່ສະແດງໃຫ້ເຫັນເຖິງຄວາມຮັກ ແລະ ເຂົ້າລຶບວິຊາຊີບປະຕິບັດຄຳຕັດສິນຂອງສານ ເພື່ອຮັກສາ ແລະ ສົ່ງເສີມກຽດສັກສີ, ຊື່ສຽງ ແລະ ຖານະຂອງວິຊາຊີບປະຕິບັດຄຳຕັດສິນຂອງສານ.

ຈັນຍາບັນວິຊາຊີບປະຕິບັດຄຳຕັດສິນຂອງສານ ເປັນຫຼັກເກນທີ່ເວົ້າເຖິງ ການປະຕິບັດໜ້າທີ່ໃນວິຊາຊີບທີ່ດີ ແລະ ການວາງຕົວຢູ່ໃນສັງຄົມທີ່ດີ ຂອງນັກວິຊາຊີບປະຕິບັດຄຳຕັດສິນຂອງສານ. ຊຶ່ງຈັນຍາບັນວິຊາຊີບດັ່ງກ່າວນີ້ ເປັນເລື່ອງທີ່ສຳຄັນທີ່ສຸດເລື່ອງໜຶ່ງທີ່ຕ້ອງຮຽນຮູ້ ແລະ ປະຕິບັດ.

ໃນການປະຕິບັດຄຳຕັດສິນຂອງສານ ຈັນຍາບັນເປັນສິ່ງທີ່ເຮັດໃຫ້ເກີດຄວາມຖືກຕ້ອງ, ເປັນທຳຢູ່ໃນສັງຄົມ, ເຮັດໃຫ້ພະນັກງານປະຕິບັດຄຳຕັດສິນຂອງສານ ສາມາດປະກອບອາຊີບໄດ້ດີທີ່ສຸດ ແລະ ສາມາດຮັກສາກຽດຕິຍົດຂອງວິຊາຊີບໄວ້ໄດ້ອີກດ້ວຍ, ສະຫຼຸບແລ້ວຈັນຍາບັນຂອງວິຊາຊີບປະຕິບັດຄຳຕັດສິນຂອງສານ ມີຄວາມສຳຄັນຢູ່ສອງສ່ວນດ້ວຍກັນ ຄື: ການປະຕິບັດໜ້າທີ່ໃນວິຊາຊີບທີ່ດີ ແລະ ການວາງຕົວຢູ່ໃນສັງຄົມທີ່ດີ ຂອງນັກວິຊາຊີບປະຕິບັດຄຳຕັດສິນຂອງສານ.

## 2. ຄວາມສຳຄັນຂອງຈັນຍາບັນຕໍ່ອົງການປະຕິບັດຄຳຕັດສິນຂອງສານ

ຈັນຍາບັນມີຄວາມສຳຄັນຢ່າງຍິ່ງຕໍ່ອົງການປະຕິບັດຄຳຕັດສິນຂອງສານ ຖ້າພະນັກງານປະຕິບັດຄຳຕັດສິນຂອງສານ ປະພຶດທີ່ດີຕໍ່ອາຊີບຂອງຕົນເອງ ຈະເຮັດໃຫ້ຄູ່ຄວາມ ແລະ ສັງຄົມມີຄວາມເຊື່ອຖືຕໍ່ອົງການປະຕິບັດຄຳຕັດສິນຂອງສານ, ຫຼີກລ້ຽງຫາງສຽງຈາກສັງຄົມໄປໃນທາງທີ່ບໍ່ດີ ເຮັດໃຫ້ການປະຕິບັດຄຳຕັດສິນຂອງສານຖືກຕ້ອງຕາມກົດໝາຍ ແລະ ຍຸຕິທຳ. ກົງກັນຂ້າມ ຖ້າພະນັກງານປະຕິບັດຄຳຕັດສິນຂອງສານ ຫາກຂາດຈັນຍາບັນ ເຊັ່ນ: ປະຕິບັດໜ້າທີ່ບໍ່ຖືກຕ້ອງຕາມກົດໝາຍ ເປັນຕົ້ນວ່າ ກົດໜ່ວງຖ່ວງດຶງ, ແກ່ຍາວເວລາການປະຕິບັດຄຳຕັດສິນຂອງສານ ຫຼື ລະເມີດຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ກໍຍ່ອມສົ່ງຜົນສະທ້ອນທາງລົບຕໍ່ອົງການປະຕິບັດຄຳຕັດສິນຂອງສານ.

### 3. ຄວາມໝາຍ, ຄວາມສຳຄັນຂອງຈັນຍາບັນພະນັກງານປະຕິບັດຄຳຕັດສິນຂອງສານ

ພະນັກງານປະຕິບັດຄຳຕັດສິນຂອງສານ ຄວນຈະປະພຶດຕົນແນວໃດ, ບໍ່ວ່າໃນໂມງລັດຖະການ ກໍຄືນອກໂມງລັດຖະການ ຕະຫຼອດເຖິງການດຳລົງຊີວິດຂອງຄອບຄົວແນວໃດ? ໃນທ່າມກາງສາຍຕາຂອງສັງຄົມ ທີ່ຕິດຕາມກວດກາຢູ່ທຸກເວລາ, ພະນັກງານປະຕິບັດຄຳຕັດສິນຂອງສານ ຈະປະຕິບັດໄດ້ດີ ຫຼື ບໍ່ດີ, ລ້ວນແລ້ວແຕ່ ແມ່ນການປະພຶດທີ່ກຳນົດໄວ້ໃນຈັນຍາບັນ. ດັ່ງນັ້ນ, ພະນັກງານປະຕິບັດຄຳຕັດສິນຂອງສານຍາມໃດກໍຕ້ອງຍຶດໝັ້ນສະເໝີວ່າ ເປັນຫຍັງສັງຄົມ ຈຶ່ງຕິດຕາມກວດກາ ພວກເຮົາຄືແນວນີ້ ເນື່ອງຈາກວ່າການປະຕິບັດຄຳຕັດສິນແມ່ນຂະບວນສຸດທ້າຍທີ່ເຫັນໝາກເຫັນຜົນ ຫຼື ສູນເສຍໝາກຜົນ ຫຼື ສູນເສຍກຽດສັກສີຂອງຄູ່ຄວາມ, ຊຶ່ງບຸກຄົນເຫຼົ່ານັ້ນ ຍັງບໍ່ຍອມຮັບທີ່ຈະປະຕິບັດຕາມຄຳຕັດສິນຂອງສານໂດຍກົງ (ເມື່ອຜູ້ກ່ຽວຫາກເສຍຜົນປະໂຫຍດ ແລະ ຍັງມີບ່ອນອີງອື່ນໆ ເຊັ່ນ: ຊ່ອງຫວ່າງຂອງກົດໝາຍ, ຄວາມບໍ່ເປັນເອກະພາບຂອງພາກສ່ວນກ່ຽວຂ້ອງ) ບຸກຄົນທີ່ສູນເສຍຜົນປະໂຫຍດເຫຼົ່ານັ້ນ ກໍອາດຈະຈົ່ມວ່າ ອັນບໍ່ດີຕໍ່ການປະຕິບັດໜ້າທີ່ຂອງພະນັກ ງານປະຕິບັດຄຳຕັດສິນຂອງສານ. ສະນັ້ນ, ເພື່ອເປັນການຫຼີກເວັ້ນບັນຫາດັ່ງກ່າວ, ພວກເຮົາຕ້ອງເຂົ້າໃຈນຳກັນຕື່ມອີກວ່າ ການປະຕິບັດຄຳຕັດສິນຂອງສານ ບໍ່ພຽງແຕ່ໃຫ້ຄວາມເປັນທຳຕາມຄຳຕັດສິນຂອງສານ ໃຫ້ແກ່ຄູ່ຄວາມເທົ່ານັ້ນ ແຕ່ຍັງໃຫ້ຄູ່ຄວາມ, ຍາດພີ່ນ້ອງຂອງຄູ່ຄວາມ, ການຈັດຕັ້ງທີ່ກ່ຽວຂ້ອງ ແລະ ປະຊາຊົນໃນສັງຄົມເຊື່ອ ໝັ້ນທັງໃຫ້ຄວາມສັດທາ ໃນຕົວຂອງພະນັກງານປະຕິບັດຄຳຕັດສິນຂອງສານ ຕະຫຼອດເຖິງອົງການຄຸ້ມຄອງທີ່ພະນັກງານຜູ້ນັ້ນສັງກັດຢູ່ອີກດ້ວຍ[1].

ເພື່ອໃຫ້ວຽກງານປະຕິບັດຄຳຕັດສິນຂອງສານສາມາດຮັບໃຊ້ ແລະ ປະຕິບັດໜ້າທີ່ການເມືອງຂອງພັກທີ່ມອບໝາຍໃຫ້ນັ້ນ ໄດ້ຮັບການຈັດຕັ້ງຢ່າງຖືກຕ້ອງເປັນທຳ ແລະ ເປັນໄປຕາມນະໂຍບາຍຂອງລັດ ກ່ຽວກັບບັນຫາດັ່ງກ່າວໃຫ້ຫຼາຍພາກສ່ວນໄດ້ເຂົ້າໃຈ, ມີສ່ວນຮ່ວມ, ໃນການປະກອບຄຳຄິດຄຳເຫັນ, ທັງໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກ ທັງເປັນການຫຼຸດຜ່ອນທາງສຽງວິພາກ, ວິຈານຂອງສັງຄົມ ແລະ ເພື່ອຄວາມເປັນເອກະພາບໃນການປະຕິບັດແນວທາງຂອງພັກ, ພ້ອມກັນປະຕິບັດລະບຽບກົດໝາຍຂອງລັດຢ່າງເຂັ້ມງວດນັ້ນ ໃນໄລຍະຜ່ານມາພະນັກງານປະຕິບັດຄຳຕັດສິນຂອງສານຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນສ່ວນຫຼາຍ ແມ່ນນັກວິຊາການກົດໝາຍທີ່ໜຸ່ມນ້ອຍ, ປະສົບການຍັງບໍ່ຫຼາຍ, ອີງໃສ່ແຕ່ກົດໝາຍ ແລະ ຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດເທົ່ານັ້ນ ແຕ່ວິທີການ, ມາດຕະການທີ່ນຳໃຊ້ໃນການປະຕິບັດບາງຄັ້ງຍັງບໍ່ທັນສອດຄ່ອງກັບສະພາບຄວາມເປັນຈິງ, ບາງຄັ້ງຍັງສວຍໃຊ້ອຳນາດໜ້າທີ່ ທີ່ຕົນຮັບຜິດຊອບເພື່ອຫວງເອົາຜົນປະໂຫຍດ ຊຶ່ງສະແດງອອກ ເຊັ່ນ:

- ການປະຕິບັດຄຳຕັດສິນຂອງສານບາງຄັ້ງກໍຮີບຮ້ອນ, ຟ້າວຟັ່ງ, ຂາດການຄົ້ນຄ້ວາພິຈາລະນາ ສິ່ງຜົນກະທົບຕໍ່ການຈັດຕັ້ງ ແລະ ຕໍ່ຕົນເອງ;

- ບາງຄັ້ງຊໍ້າພັດບໍ່ຢາກປະຕິບັດ, ແກ່ຍາວ, ຊັກຊ້າ, ຖ່ວງດຶງ ທັງໝົດນີ້ກໍແມ່ນການສວຍໂອກາດ ຫຼື ການປະລະໜ້າທີ່ຂອງພະນັກງານປະຕິບັດຄຳຕັດສິນຂອງສານ ເພື່ອຫວັງຜົນປະໂຫຍດໂດຍອ້າງເຫດຜົນເຊັ່ນ: ຄູ່ຄວາມບໍ່ໃຫ້ການຮ່ວມມື, ຜູ້ຖືກປະຕິບັດຄຳຕັດສິນບໍ່ມີຊັບສິນ, ຍັງຍື່ນຄຳຮ້ອງທຸກຫາພາກສ່ວນອື່ນ, ປະປ່ອຍໃຫ້ການປະຕິບັດຄຳຕັດສິນຂອງສານຊັກຊ້າ, ແກ່ຍາວເວລາ;

---

[1] ທ່ານ ບຸນຕາ ສ.ພາບມີໄຊ, ປຶ້ມຄູ່ມືກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ປີ 2011, ໜ້າ 8.

- ການປະຕິບັດຄຳຕັດສິນຂອງສານບາງເລື່ອງຍັງໃຊ້ມາດຕະການທີ່ບໍ່ຖືກຕາມຂໍ້ກຳນົດຂອງກົດໝາຍ, ໂດຍບໍ່ມີວິທີການສຶກສາອົບຮົມໃຫ້ຜູ້ຖືກປະຕິບັດຄຳຕັດສິນຂອງສານໄດ້ເຂົ້າໃຈ, ເຫັນດີ, ເຫັນພ້ອມ ແລະ ຮ່ວມມືໃນການປະຕິບັດ;

- ບາງເລື່ອງພະນັກງານປະຕິບັດຄຳຕັດສິນຂອງສານຍັງສ້າງເງື່ອນໄຂເພື່ອຫຼີກລ້ຽງຕໍ່ຄວາມຮັບຜິດຊອບຂອງຕົນ ໂດຍອ້າງເຫດຜົນວ່າ ຍັງມີຜູ້ມີອິດທິພົນທາງຕຳແໜ່ງໜ້າທີ່ ຫຼື ຜູ້ມີອິດທິພົນທາງດ້ານເສດຖະກິດ ສັ່ງແນວນັ້ນ, ແນວນີ້ ສິ່ງຜົນສະທ້ອນໃຫ້ພະນັກງານປະຕິບັດຄຳຕັດສິນຂອງສານ ປະຕິບັດໄວ ຫຼື ຊ້າ ຫຼື ບໍ່ທັນໃຫ້ປະຕິບັດ, ມີເຈດຕະນາແກ່ຍາວ ຫຼື ໂຈະການປະຕິບັດໄວ້ຊົ່ວຄາວໂດຍບໍ່ມີຄຳສັ່ງໂຈະຈາກຜູ້ມີສິດຕາມກົດໝາຍ, ບາງຄັ້ງຍັງເຫັນດີເຫັນພ້ອມກັບບຸກຄົນທີ່ຖືກປະຕິບັດຄຳຕັດສິນ ກ່າວໂຈມຕີພະນັກງານປະຕິບັດຄຳຕັດສິນຂອງສານທີ່ເຮັດວຽກງານຕົວຈິງ ຢູ່ຕາມແຕ່ລະທ້ອງຖິ່ນ ປາກົດການຫຍໍ້ທໍ້ໃນອົງການປະຕິບັດຄຳຕັດສິນຂອງສານ.

- ບາງເລື່ອງກໍອ້າງວ່າສານຕັດສິນບໍ່ຍຸຕິທຳ, ບໍ່ຖືກຕ້ອງ, ບໍ່ສອດຄ່ອງກັບສະພາບຄວາມເປັນຈິງຂອງຄະດີ, ລະບຽບກົດໝາຍ, ບໍ່ອີງໃສ່ສະພາບການຕົວຈິງຢູ່ທ້ອງຖິ່ນ ຫຼື ບາງຄະດີບໍ່ເປັນໄປຕາມການຊີ້ນຳ ເຮັດໃຫ້ການປະຕິບັດຄຳຕັດສິນຂອງສານມີອັນຜິດພາດ;

- ພະນັກງານປະຕິບັດຄຳຕັດສິນຂອງສານ ຍັງມີທັດສະນະໃນຕົວ ຫຼື ທວງເອົາແຕ່ຜົນປະໂຫຍດ ແຕ່ກົງກັນຂ້າມເລື່ອງໃດບໍ່ມີຜົນປະໂຫຍດຊໍ້າພັດບໍ່ປະຕິບັດໃຫ້, ຂາດຈັນຍາບັນວິຊາຊີບ ຮັບສິນບົນໂດຍທາງກົງ ຫຼື ທາງອ້ອມ, ຂາດການຝຶກຝົນຫຼໍ່ຫຼອມຕົນເອງທາງດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ບໍ່ຮູ້ພັດ ທະນາຕົນເອງໃນແຕ່ລະດ້ານ, ຄວາມຮູ້ວິຊາສະເພາະຍັງບໍ່ທັນຫຼາຍ, ເຮັດຕາມຄຳສັ່ງ, ບໍ່ມີຫົວຄິດປະດິດສ້າງໃນວຽກງານຂອງຕົນ ຫຼື ບໍ່ຮູ້ເຮັດວຽກ ຫຼື ເຮັດວຽກໄດ້ແຕ່ບໍ່ເອົາໃຈໃສ່, ຂາດການພັດທະນາຕົນເອງທາງດ້ານຄວາມຮູ້ຄວາມສາມາດ ແລະ ພາສາຕ່າງປະເທດ....

**4. ຈັນຍາບັນທີ່ພະນັກງານຄຸ້ມຄອງ ແລະ ພະນັກງານປະຕິບັດຄຳຕັດສິນຂອງສານຕ້ອງປະຕິບັດ**

ຈັນຍາບັນທີ່ຕ້ອງປະຕິບັດເປັນອັນສະເພາະສຳລັບພະນັກງານຄຸ້ມຄອງ ແລະ ພະນັກງານປະຕິບັດຄຳຕັດສິນຂອງສານປະກອບມີດັ່ງນີ້:

1) ພະນັກງານຄຸ້ມຄອງ ແລະ ພະນັກງານປະຕິບັດຄຳຕັດສິນຂອງສານຕ້ອງມີອຸດົມການທາງການເມືອງທີ່ໜັກແໜ້ນ[2]

- ພະນັກງານປະຕິບັດຄຳຕັດສິນຂອງສານ ຕ້ອງປັບປຸງ ບຳລຸງຍົກລະດັບຄວາມຮູ້ຄວາມສາມາດ, ສ້າງຕົນເອງໃຫ້ມີອຸດົມການສັງຄົມນິຍົມ ໝາຍຄວາມວ່າ ຕ້ອງປັບປຸງທັດສະນະຫຼັກໝັ້ນຊົນຊັ້ນ, ຈຳແນກມິດ-ສັດຕູ ແລະ ຄວາມເດັດດ່ຽວ ໜຽວແໜ້ນ ຕໍ່ອຸດົມການສັງຄົມນິຍົມ ຍາມໃດກໍມີຈິດໃຈສູ້ຊົນຮັບໃຊ້ຜົນປະໂຫຍດຂອງປະເທດຊາດຢ່າງສຸດກົກສຸດປາຍ, ບໍ່ເຫັນແກ່ຕົວ, ເສຍສະຫຼະຜົນປະໂຫຍດສ່ວນຕົວຂອງຕົນ ເພື່ອຜົນປະໂຫຍດລວມຂອງປະເທດຊາດ.

- ບຳລຸງສ້າງຖັນແຖວພະນັກງານປະຕິບັດຄຳຕັດສິນຂອງສານໃຫ້ມີຄວາມໜັກແໜ້ນ, ອົດທົນ, ພະຍາຍາມຢ່າງຕັ້ງໜ້າ, ຫ້າວຫັນ, ມີຫົວຄິດປະດິດສ້າງ ແລະ ມີຄວາມຮັບຜິດຊອບສູງໃນການປະຕິບັດໜ້າທີ່ວຽກງານ, ຕັດສິນໃຈຜ່ານຜ່າອຸປະສັກຫຍຸ້ງຍາກນາໆປະການ ເພື່ອເຮັດສຳເລັດພາລະກິດປະຕິວັດຂອງພັກ, ຂອງຊາດ ແລະ ປະຊາຊົນ.

---

[2] ທ່ານ ບຸນຕາ ສ.ພາບມີໄຊ, ປຶ້ມຄູ່ມືກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ປີ 2011, ໜ້າ 10.

2) ພະນັກງານປະຕິບັດຄຳຕັດສິນຂອງສານ ຕ້ອງມີນ້ຳໃຈຮັບໃຊ້ຊາດ, ຮັບໃຊ້ປະຊາຊົນ[3]

ພະນັກງານປະຕິບັດຄຳຕັດສິນຂອງສານ ຕ້ອງມີນ້ຳໃຈຮັບໃຊ້ຊາດ, ຮັບໃຊ້ສັງຄົມ ເວົ້າລວມແລ້ວພະນັກ ງານປະຕິບັດຄຳຕັດສິນຂອງສານຕ້ອງໄດ້ປະຕິບັດແນວທາງຂອງພັກເວົ້າລວມ, ເວົ້າສະເພາະແມ່ນທັດສະນະຮັບໃຊ້ປະຊາຊົນ ຫຼື ຄູ່ຄວາມທີ່ກ່ຽວຂ້ອງກັບການປະຕິບັດຄຳຕັດສິນຂອງສານ ຫຼື ຜູ້ທີ່ມາພົວພັນວຽກງານ, ພະນັກງານປະຕິບັດຄຳຕັດສິນຂອງສານຕ້ອງໄດ້ອົດທົນເສຍສະຫຼະຮັບໃຊ້ຄູ່ຄວາມຈົນສຸດຄວາມສາມາດ ແລະ ເຮັດໃຫ້ຄຳຕັດສິນຂອງສານນັ້ນສາມາດປະຕິບັດໄດ້ໃນພາກຕົວຈິງ ໂດຍບໍ່ຫວັງສິ່ງຕອບແທນໃດໆ ເພື່ອຟື້ນຟູສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜົນລະເມືອງທີ່ຖືກລະເມີດ ຫຼື ສູນເສຍໄປນັ້ນ ກັບຄືນມາດ້ວຍຄວາມເພິ່ງພໍໃຈຂອງຄູ່ຄວາມ, ຍາດພີ່ນ້ອງຂອງຄູ່ຄວາມ ແລະ ສັງຄົມ;

3) ພະນັກງານປະຕິບັດຄຳຕັດສິນຂອງສານ ຕ້ອງເປັນຜູ້ທີ່ມີຄວາມດຸໝັ່ນ, ຮ່ຳຮຽນ, ສັດຊື່ ແລະ ປອດໃສ

- ດຸໝັ່ນ: ສະແດງອອກໃນການປະຕິບັດໜ້າທີ່ດ້ວຍຄວາມຫ້າວຫັນ ບຸກບືນ, ຕື່ນຕົວເປັນເຈົ້າການໃນທາງທີ່ຖືກຕ້ອງ ເຖິງວຽກງານຈະຫຍຸ້ງຍາກປານໃດກໍຕາມ ແຕ່ກໍໃຊ້ຄວາມພະຍາຍາມ ປະຕິບັດສຸດກົກສຸດປາຍເຮັດວຽກຢ່າງຮອບຄອບ ມີປະສິດທິຜົນ ແລະ ເຮັດສຳເລັດຕາມລະດັບຄາດໝາຍ;

- ຮ່ຳຮຽນ: ການສຶກສາຮ່ຳຮຽນເປັນບັນຫາສຳຄັນ ສຳລັບພະນັກງານປະຕິບັດຄຳຕັດສິນຂອງສານ ເນື່ອງຈາກວ່າຂໍ້ມູນຂ່າວສານກົດໝາຍ ກໍຄືສະພາບການສັງຄົມມີການຫັນປ່ຽນຢ່າງໄວວາ, ການສຶກສາຮ່ຳຮຽນ ແນວທາງຍຸດຕິທຳຂອງພັກ, ຮ່ຳຮຽນທິດສະດີປະຕິວັດ, ຮ່ຳຮຽນນຳພະນັກອາວຸດໂສ ຫຼື ຮ່ຳຮຽນນຳໝູ່ຄະນະ, ຮ່ຳຮຽນພາສາຕ່າງປະເທດ ລ້ວນແລ້ວແຕ່ເປັນການປະດັບຄວາມຮູ້ທີ່ຈຳເປັນໃຫ້ແກ່ພະນັກງານຈັດຕັ້ງ ປະຕິບັດຄຳຕັດສິນຂອງສານ ໃນການປະຕິບັດໜ້າທີ່ວຽກງານວິຊາສະເພາະຂອງຕົນ;

- ພາກພຽນ: ໝາຍເຖິງການປະຕິບັດໜ້າທີ່ດ້ວຍຄວາມດຸໝັ່ນ ຢ່າງມີຫົວຄິດປະດິດສ້າງ ໂດຍນຳໃຊ້ຄວາມຮູ້ຄວາມສາມາດ ແລະ ປະສົບການທີ່ຮຽນມາໃຫ້ເກີດປະໂຫຍດສູງສຸດ, ຄວາມພາກພຽນຂອງພະນັກງານປະຕິບັດຄຳຕັດສິນຂອງສານຍັງລວມເຖິງ ການເຮັດວຽກຢ່າງມີແຜນການ, ມີການຕິດຕາມກວດກາ, ເຮັດຜິດພາດກໍມີຄວາມພະຍາຍາມແກ້ໄຂໃຫ້ດີຂຶ້ນ ແລະ ທັນກັບເວລາ ເຮັດວຽກທີ່ມີຄວາມຫຍຸ້ງຍາກກໍມີຄວາມລະອຽດອ່ອນ ແລະ ປະສົບຜົນສຳເລັດ, ບໍ່ມີບັນຫາຫຍັງທີ່ຈະສິ່ງຜົນສະທ້ອນທີ່ບໍ່ດີຕາມມາສູ່ການຈັດຕັ້ງ;

- ຊື່ສັດ: ແມ່ນສັດຈະທຳ ແມ່ນການກະທຳທີ່ສອດຄ່ອງກັບຄຳເວົ້າ, ບໍ່ເວົ້າຕົວະ, ບໍ່ລາຍງານທີ່ບໍ່ຖືກຕ້ອງໃຫ້ຂັ້ນເທິງ ຫຼື ແຈ້ງການບໍ່ຖືກຕ້ອງໃຫ້ຂັ້ນລຸ່ມ ເພື່ອຜົນປະໂຫຍດສ່ວນຕົວ, ບໍ່ຄົດໂກງ, ບໍ່ສວຍໂອກາດລັກໂລບ ຍັກຍອກເອົາຊັບສິ່ງຂອງຂອງຜູ້ອື່ນ ກໍຄືຂອງການຈັດຕັ້ງພັກ-ລັດ, ມອບໝາຍໜ້າທີ່ໃດໃຫ້ກໍສຳເລັດ;

- ປອດໃສ: ໝາຍເຖິງ ຈິດໃຈ ແລະ ການກະທຳທີ່ໄສສະອາດບໍລິສຸດສັດຊື່ ຈິງໃຈຕໍ່ການຈັດຕັ້ງ ກໍຄືຄອບຄົວ ບໍ່ສໍ້ລາດບັງຫຼວງ, ບໍ່ຮັບຄ່າຈ້າງສິນບົນ, ບໍ່ກົດໜ່ວງທ່ວງດຶງເວລາປະຕິບັດ ເພື່ອຮຽກທວງເອົາຜົນປະໂຫຍດຕອບແທນ...

4) ພະນັກງານປະຕິບັດຄຳຕັດສິນຂອງສານ ຕ້ອງມີລະບຽບວິໃນ ແລະ ເຄົາລົບກົດໝາຍຢ່າງເຂັ້ມງວດ[4]

---

ທ່ານ ບຸນຕາ ສ.ພາບມີໄຊ, ປື້ມຄູ່ມືກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ປີ 2011, ໜ້າ 10.

[4] ທ່ານ ບຸນຕາ ສ.ພາບມີໄຊ, ປື້ມຄູ່ມືກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ປີ 2011, ໜ້າ 11.

ເປັນພະນັກງານປະຕິບັດຄຳຕັດສິນຂອງສານ ຕ້ອງປະຕິບັດກົດໝາຍຢ່າງເຄັ່ງຄັດ ແລະ ມີລະບຽບວິໄນ ອັນສູງສົ່ງ, ບໍ່ແມ່ນວ່າເປັນພະນັກງານປະຕິບັດຄຳຕັດສິນຂອງສານແລ້ວຈະຢູ່ເໜືອກົດໝາຍ ອັນສຳຄັນແມ່ນບໍ່ສວຍໃຊ້ ຫຼື ລະເມີດກົດໝາຍ, ກົດລະບຽບຕ່າງໆ ເພື່ອໃຫ້ຕົນມີຄວາມສະດວກມີຜົນປະໂຫຍດ ອັນຈະພາໃຫ້ປະຊາຊົນຂາດຄວາມເຊື່ອຖື.

ການມີລະບຽບວິໄນ ແລະ ເຄົາລົບກົດໝາຍຍັງຕ້ອງສະແດງອອກໃນການເຄົາລົບສິດເສລີພາບຂອງພົນລະເມືອງ, ໃນຄວາມເປັນເຈົ້າການປະກອບສ່ວນປົກປ້ອງກົດໝາຍ ແລະ ຄວາມຍຸຕິທຳ,ປະກອບສ່ວນເຂົ້າ ໃນການຮັກສາຄວາມສະຫງົບຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມປອດໄພ.

5) ພະນັກງານປະຕິບັດຄຳຕັດສິນຂອງສານ ຕ້ອງມີຄວາມສາມັກຄີເອື້ອເຟື້ອເພື່ອແຜ່

ຄວາມສາມັກຄີເອື້ອເຟື້ອເພື່ອແຜ່ ແມ່ນການສະແດງອອກດ້ວຍຄວາມເຄົາລົບນັບຖືຊຶ່ງກັນ ແລະ ກັນ, ຮັກແພງກັນ ແລະ ເຊື່ອໝັ້ນຊຶ່ງກັນ ແລະ ກັນ, ຢູ່ຮ່ວມກັນ, ເຮັດວຽກນຳກັນດ້ວຍຄວາມເຂົ້າອົກເຂົ້າໃຈກັນ ແລະ ມີການຜ່ອນສັ້ນ, ຜ່ອນຍາວຊຶ່ງກັນ ແລະ ກັນ, ມີຈິດໃຈເສຍສະຫຼະເພື່ອຜູ້ອື່ນດ້ວຍຄວາມບໍລິສຸດໃຈ, ບໍ່ຢ້ານລີ່ຢ້ານເຫຼືອ ແລະ ບໍ່ອະຄະຕິອິດສາບັງບຽດຜູ້ອື່ນ.

6) ຕັ້ງໜ້າພັດທະນາຄອບຄົວໃຫ້ເປັນຄອບຄົວວັດທະນະທຳໃໝ່ ທີ່ມີແບບແຜນດຳລົງຊີວິດສົດໃສ, ຮັກ ຫອມຕອມຕຸ້ມ ແລະ ມີຄວາມຜາສຸກຄວາມສະເໝີພາບ ໃນການພົວພັນລະຫວ່າງຜົວ-ເມຍ, ພໍ່-ແມ່ ແລະ ລູກເຕົ້າ, ຍາດພີ່ນ້ອງ ແລະ ເພື່ອນມິດ.

ໄປຄຽງຄູ່ກັບການສ້າງແບບດຳລົງຊີວິດທີ່ກ້າວໜ້ານັ້ນ ຕ້ອງຕັ້ງໜ້າຕໍ່ສູ້ຕ້ານແບບແຜນດຳລົງຊີວິດທີ່ ເສື່ອມຊາມຫຼູຫຼາ, ຄັບແຄບ, ມີແຕ່ເອົາໃຈໃສ່ສ້າງຮັ່ງຄູນມີໃຫ້ສ່ວນຕົວ, ເຊື່ອຖືງົມງາຍ, ຂີ້ຄ້ານມັກງ່າຍ, ຄ້ານ ຮ່ຳຮຽນ, ບໍ່ມີຫົວຄິດປະດິດສ້າງ, ເສື່ອມຄຸນເສຍທາດ, ເກາະກິນ ແລະ ອື່ນໆ.

7) ຕັ້ງໜ້າປະຕິບັດບັນດາຂໍ້ຫ້າມສຳລັບສຳລັບພະນັກງານຄຸ້ມຄອງ ແລະ ພະນັກງານປະຕິບັດຄຳຕັດສິນຂອງສານ.

8) ສ້າງຄວາມເປັນແບບຢ່າງນຳໜ້າ

ພະນັກງານປະຕິບັດຄຳຕັດສິນຂອງສານ ຕ້ອງຕັ້ງໜ້າຝຶກຝົນຫຼໍ່ຫຼອມຕົນເອງ ບຸກບືນເປັນແບບຢ່າງນຳໜ້າໃນທຸກຂະບວນການ ພຶດຕິກຳໄດ້ຢັ້ງຢືນວ່າ ຖ້າພະນັກງານຄົນໃດ ຫາກຕັ້ງໜ້າເຄື່ອນໄຫວເປັນແບບຢ່າງນຳໜ້າໃນການປະຕິບັດໜ້າທີ່ວຽກງານມະຫາຊົນກໍນັບຖື, ຮັກແພງ, ເຊື່ອໝັ້ນ ແລະ ສະໜັບສະໜູນ ຖ້າບໍ່ດັ່ງນັ້ນແລ້ວຈະຖືກມະຫາຊົນຂາດຄວາມເຫຼື້ອມໃສສັດທາ, ຂາດຄວາມໄວ້ວາງໃຈ ແລະ ນຳໄປເຖິງຄວາມ ໝົດສິ້ນບົດບາດຕໍ່ມະຫາຊົນ[5].

9) ການວາງຕົວໃຫ້ເປັນກາງ

ພະນັກງານປະຕິບັດຄຳຕັດສິນຂອງສານຕ້ອງຢູ່ໃນຖານະເປັນຄົນກາງ ບໍ່ເຂົ້າຂ້າງອອກຂາຝ່າຍ ໃດ ຝ່າຍໜຶ່ງ, ຄວນປະຕິບັດຕໍ່ຄູ່ຄວາມ ແລະ ພາກສ່ວນທີ່ກ່ຽວຂ້ອງທຸກຝ່າຍຢ່າງສະເໝີພາບກັນທຸກປະການ, ບໍ່ຄວນ ສັນນິຖານກ່ອນວ່າ ແນ່ນອນຕ້ອງປະຕິບັດແນວນັ້ນ ຫຼື ແນວນີ້ ໃຫ້ຝ່າຍໃດ ຝ່າຍໜຶ່ງຫຼື ເອົາຈິດໃຈຂອງຕົນເອງໄປຕິດພັນກັບການປະຕິບັດໃນຄຳຕັດສິນໃດໜຶ່ງ ຫຼື ນຳບຸກຄົນໃດບຸກຄົນໜຶ່ງ, ຖ້າຫາກປະຕິບັດບໍ່ໄດ້ຄືແນວນັ້ນ ຫຼື ຂັ້ນເທິງຂອງຕົນ ຫຼື ພາກສ່ວນກ່ຽວຂ້ອງອື່ນໆ ມີຄຳເຫັນທີ່ແຕກຕ່າງຈາກຕົນ ຄາດຄິດເອົາໄວ້ນັ້ນ, ກໍຕີຕົນເອງເຂົ້າກັບຄູ່ຄວາມທີ່ຕົນຈະ

---

[5] ທ່ານ ບຸນຕາ ສ.ພາບມີໄຊ, ປຶ້ມຄູ່ມືກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ປີ 2011, ໜ້າ 12.

ປະຕິບັດໃຫ້ນັ້ນໂດຍກົງ, ຫຼື ຮ້າຍແຮງໄປກ່ວານັ້ນ ຍັງມີລັກສະນະຕອບຕ້ານກັບການຈັດຕັ້ງພັກ-ລັດຕື່ມອີກ, ຊຶ່ງເຮັດໃຫ້ຄູ່ຄວາມອີກຝ່າຍໜຶ່ງເກີດມີການ ລະແວງສົງໃສເຖິງຄວາມບໍ່ໂປ່ງໃສ ແລະຄວາມບໍ່ເປັນກາງຂອງພະນັກງານປະຕິບັດຄຳຕັດສິນຂອງສານ[6].

10) ປາດສະຈາກອະຄະຕິ (ການລຳອຽງ) ສີ່ ປະການ

ເວລາປະຕິບັດຄຳຕັດສິນຄະດີໃດໜຶ່ງ ພະນັກງານປະຕິບັດຄຳຕັດສິນຂອງສານ ຕ້ອງຫຼີກເວັ້ນຈາກອະຄະຕິທັງສີ່ປະການຄື:

- ສັນທາຄະຕິ (ການລຳອຽງເພາະຄວາມຮັກໃຄ່)

ໝາຍຄວາມວ່າ ເວລາປະຕິບັດຄຳຕັດສິນຂອງສານ ບໍ່ໃຫ້ລຳອຽງໄປໃນຄວາມຮັກ ຫຼື ຄວາມຊັງ ຕາມສາຍຍາດພີ່ນ້ອງ ຫຼື ພັກພວກຂອງຕົນ ຈົນເຮັດໃຫ້ການປະຕິບັດໜ້າທີ່, ການດຳເນີນຄະດີ ຫຼື ແກ້ໄຂວຽກງານຕ່າງໆທີ່ເກີດຂຶ້ນບໍ່ຖືກຕ້ອງ ຫຼືບໍ່ມີຄວາມເປັນທຳ.

- ໂທສາຄະຕິ (ການລຳອຽງເພາະຄວາມໂກດ)

ໝາຍຄວາມວ່າ ເວລາປະຕິບັດຄຳຕັດສິນຂອງສານ ບໍ່ໃຫ້ລຳອຽງໄປໃນຄວາມຮ້າຍ, ຄວາມໂກດ, ໃຊ້ອຳນາດບາບຊູ່, ຂົ່ມເຫັງຄູ່ຄວາມ ຫຼື ຜູ້ທີ່ກ່ຽວຂ້ອງດ້ວຍຄວາມບໍ່ພໍໃຈ ຫຼື ດ້ວຍທ່າທີຂຶງຂັງ, ດ້ວຍຄວາມຄຽດແຄ້ນ ຫລື ມີອະຄະຕິຕໍ່ຜູ້ທີ່ມີຄວາມບໍ່ລົງລອຍກັບຕົນ ຫຼື ກັບຍາດພີ່ນ້ອງ ແລະ ພັກພວກຂອງຕົນມາກ່ອນ.

- ໂມຫາຄະຕິ (ການລຳອຽງເພາະຄວາມຫຼົງ, ຮູ້ບໍ່ເທົ່າທັນ,)

ໝາຍຄວາມວ່າ ເວລາປະຕິບັດຄຳຕັດສິນຂອງສານ ບໍ່ໃຫ້ລຳອຽງໄປໃນທາງຫຼົງໄຫຼຕໍ່ສິ່ງທີ່ບໍ່ດີ, ບໍ່ໃຫ້ຫຼົງເຊື່ອຄວາມບໍ່ຈິງແລ້ວຮີບຟ້າວໄກ່ເກ່ຍ, ແກ້ໄຂບັນຫາທີ່ເກີດຂຶ້ນ ໂດຍເຂົ້າຂ້າງ ອອກຂາ, ຂາດຄວາມທ່ຽງທຳ ແລະ ຂາດຄວາມຍຸຕິທຳ, ປີ້ນຂາວໃຫ້ເປັນດຳ ຍ້ອນໄດ້ຮັບສິນບົນ ຫຼື ຜົນປະໂຫຍດອື່ນໆ.

- ພະຍາຄະຕິ (ການລຳອຽງເພາະຄວາມຢ້ານ)

ໝາຍຄວາມວ່າ ເວລາປະຕິບັດຄຳຕັດສິນຂອງສານ ບໍ່ໃຫ້ລຳອຽງຍ້ອນຄວາມຢ້ານກົວ, ບໍ່ໃຫ້ຢ້ານກົວຕໍ່ຜູ້ມີອຳນາດ, ອິດທິພົນທາງດ້ານເສດຖະກິດ, ສັງຄົມ, ບໍ່ໃຫ້ເຫັນແກ່ເງິນແສນໄຖ່ ໃຫ້ເຫັນແກ່ໄພ່ແສນເມືອງ...

11) ປະຕິບັດຕົນໃຫ້ເໝາະສົມກັບໜ້າທີ່ວຽກງານ

ວຽກງານການຄຸ້ມຄອງ ແລະ ການປະຕິບັດຄຳຕັດສິນຂອງສານເປັນວຽກງານທີ່ມີກຽດ ເປັນການປະ ຕິບັດໜ້າທີ່ການເມືອງທີ່ການຈັດຕັ້ງພັກ-ລັດມອບໝາຍໃຫ້, ຫຼາຍຄົນບໍ່ມີໂອກາດໄດ້ເຂົ້າມາຮັບໃຊ້ວຽກງານ ດັ່ງກ່າວ, ເມື່ອການຈັດຕັ້ງໄດ້ມອບໝາຍໜ້າທີ່ດັ່ງກ່າວນີ້ໃຫ້ແລ້ວ ກໍຄວນປະພຶດຕົນໃຫ້ເໝາະສົມ ເປັນຜູ້ທີ່ມີ ທັດສະນະຫຼັກໝັ້ນການເມືອງທີ່ໜັກແໜ້ນ, ມີຄວາມຈົງຮັກພັກດີ ແລະ ເຊື່ອໝັ້ນໃນອຸດົມການ, ຮັກໜ້າທີ່ວຽກ ງານ, ປະຕິບັດໜ້າທີ່ວຽກງານຂອງຕົນຢ່າງມີຄວາມສຸກ, ທັງປະຕິບັດຕົນໃຫ້ເປັນໜ້າເຊື່ອຖືຂອງສັງຄົມ... ບໍ່ຈຳ ເປັນຕ້ອງສະແດງອຳນາດໃຫ້ຄູ່ຄວາມໄດ້ເຫັນ ຫຼື ເອກອ້າງວ່າຕົນເປັນຜູ້ມີສິດຊີ້ຂາດຕໍ່ຜູ້ມາພົວພັນ ເພື່ອໃຫ້ ເຂົາເຈົ້າຍອມຮັບຕົນ[7]...

12) ການປຶກສາຫາລືເປັນຄະນະ

---

[6] ທ່ານ ບຸນຕາ ສ.ພາບມີໄຊ, ປື້ມຄູ່ມືກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ປີ 2011, ໜ້າ 12.

[7] ທ່ານ ບຸນຕາ ສ.ພາບມີໄຊ, ປື້ມຄູ່ມືກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ປີ 2011, ໜ້າ 13.

ການແກ້ໄຂວຽກງານທີ່ມີຄວາມຫຍຸ້ງຍາກ ຫຼື ຄຳຕັດສິນຂອງສານທີ່ມີຄວາມສ່ຽງສູງຕໍ່ການຕຳນິຈາກສັງຄົມ ຄວນມີການປຶກສາຫາລືເປັນຄະນະ, ນີ້ແມ່ນຫຼັກການການປະຕິບັດວຽກງານຂອງພັກ ແລະ ໄດ້ກາຍເປັນ ຫຼັກການຂອງການປະຕິບັດໜ້າທີ່ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ, ການປຶກສາຫາລື ຫຼື ຂໍຄຳຄິດຄຳເຫັນຕ້ອງໃຫ້ການເຄົາລົບ ແລະ ຍອມຮັບດ້ວຍເຫດດ້ວຍຜົນຊຶ່ງກັນ ແລະ ກັນ, ການປະກອບຄຳເຫັນຕ້ອງນິ້ມນວນ, ຄ່ອງແຄ້ວມີການຜ່ອນສັ້ນຜ່ອນຍາວ ບໍ່ຄວນເອົາແພ້ ເອົາຊະນະ ຄືກັນກັບຄູ່ຄວາມ, ຄຳເຫັນທີ່ສະແດງອອກຄວນມີລັກສະນະສ້າງສັນ ແລະ ມີສິນລະປະ ຫຼີກເວັ້ນການສະແດງຄຳຄິດເຫັນແລ້ວໃຫ້ໝູ່ຄະນະຕີລາຄາວ່າຕົນເຂົ້າຂ້າງຝ່າຍໃດຝ່າຍໜຶ່ງ ຫຼື ມີຜົນປະໂຫຍດຮ່ວມກັບຝ່າຍນັ້ນແນ່ນອນ...

13) ຄວາມສຸພາບຮຽບຮ້ອຍ ແລະ ການນຸ່ງຖືຮຽບຮ້ອຍຈົບງາມ

ຄວາມສຸພາບຮຽບຮ້ອຍແມ່ນການສະແດງເຖິງການໃຫ້ກຽດແກ່ຜູ້ອື່ນ, ແມ່ນການນັບຖືເພື່ອນຮ່ວມງານ ແລະ ປະຊາຊົນ, ຫາກພະນັກງານສະມາຊິກພັກປະພຶດຕົນບໍ່ງາມ, ມີທ່າທີແບບນັກເລງ, ຫຼິ້ນກິນເຮຮາມ່ວນຊື່ນເກີນຂອບເຂດ ຫຼື ແຕ່ງຕົວບໍ່ຮຽບຮ້ອຍປະຊາຊົນກໍ່ຈະບໍ່ນັບຖື, ສະນັ້ນ ພະນັກງານປະຕິບັດຄຳຕັດສິນ ຕ້ອງມີທ່າທີ່ສຸພາບຮຽບຮ້ອຍຕໍ່ປະຊາຊົນ, ນັບຖື ແລະ ຮັກແພງປະຊາຊົນອັນສຳຄັນທີ່ສຸດແມ່ນຕ້ອງເຮັດແທ້ທຳຈິງບໍ່ແມ່ນມີແຕ່ເວົ້າແລ້ວບໍ່ເຮັດ, ບໍ່ແມ່ນເວົ້າແນວໜຶ່ງແຕ່ເຮັດໄປອີກແນວໜຶ່ງ, ບໍ່ແມ່ນມີແຕ່ເວົ້າມີແຕ່ບອກໃຫ້ຜູ້ອື່ນ ແລະ ບອກໃຫ້ປະຊາຊົນເຮັດອັນນັ້ນ ເຮັດອັນນີ້ແຕ່ຕົນເອງຊໍ້າພັດບໍ່ຮູ້ເຮັດຫຍັງ ແລະ ກໍ່ບໍ່ຈັດຕັ້ງນຳພາເຮັດຕົວຈິງ.

ການນຸ່ງຖືແມ່ນມີຄວາມສຳຄັນພໍສົມຄວນ ໃນການປະຕິບັດໜ້າທີ່ວຽກງານກໍຕາມ ແລະ ມັນກໍເປັນການ ເສີມສ້າງບຸກຄະລິກະພາບໃຫ້ພະນັກງານຜູ້ນັ້ນເປັນໜ້ານັບຖືອີກດ້ວຍ ປັດຈຸບັນກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານກໍພະຍາຍາມສູ້ຊົນ ເພື່ອຢາກໄດ້ຊຸດເຄື່ອງແບບ ແລະ ເຄື່ອງໝາຍຕຳແໜ່ງຂອງພະນັກງານປະຕິບັດຄຳຕັດສິນໃຫ້ເປັນເອກະພາບກັນໃນທົ່ວປະເທດ, ແຕ່ປະຈຸບັນພວກເຮົາເລືອກເຟັ້ນສີຜ້າ ເຄື່ອງໝາຍ ຄາດວ່າອີກບໍ່ດົນພໍເທົ່າໃດກໍຈະໄດ້ຮັບການປະຕິບັດໃນຕົວຈິງ.

14) ການໃຊ້ວາຈາທີ່ສຸພາບ

ໃນການປະຕິບັດໜ້າທີ່ຂອງຕົນ ພະນັກງານປະຕິບັດຄຳຕັດສິນຂອງສານຄວນໃຊ້ວາຈາສຸພາບຮຽບຮ້ອຍຍັງເປັນທີ່ພໍໃຈຕໍ່ຜູ້ມາໃຊ້ ບໍລິການໂດຍສະເພາະແມ່ນຜູ້ທີ່ມີໂອກາດໄດ້ຮັບແຂກຄົນມາພົວພັນວຽກງານ, ພິເສດແມ່ນຄູ່ຄວາມທີ່ມີຄວາມ ຂັດຂ້ອງໝອງໃຈ ຫຼື ຜູ້ທີ່ບໍ່ໄດ້ຮັບຜົນປະໂຫຍດຈາກຄຳຕັດສິນຂອງສານຢູ່ແລ້ວ, ພະນັກງານປະຕິບັດຄຳຕັດສິນຂອງສານ ຍິ່ງໄດ້ເພີ່ມທະວີຄວາມເອົາໃຈໃສ່ໃນການໃຊ້ພາສາຄຳເວົ້າໃຫ້ນິ້ມນວນ, ບໍ່ແຮງ ຫຼື ຄ່ອຍເກີນໄປ, ບໍ່ເວົ້າແຂງກະດ້າງໂດຍອີງໃສ່ແຕ່ມາດຕາກົດໝາຍ ດ້ານດຽວ ຫຼື ຄຳເວົ້າທີ່ແອບແຝງດ້ວຍຄຳສັ່ງ ສາຍຕາຂອງຜູ້ເວົ້າທີ່ມີລັກສະນະກ່າວມານັ້ນ ມັກຈະໄປຄຽງຄູ່ກັບການໃຊ້ສຳນຽງ, ຖ້າເປັນຄືແນວນັ້ນ ຈະເຮັດໃຫ້ຜູ້ມາພົວພັນວຽກງານຈະຕີລາຄາເຖິງຄວາມບໍ່ມີການສຶກສາ, ວັດທະນາທຳຂອງຜູ້ເວົ້າ ຮ້າຍແຮງໄປ ກ່າວນັ້ນ ຈະຕີລາຄາວ່າພະນັກງານນີ້ມີຜົນປະໂຫຍດຈາກຄູ່ຄວາມອີກຝ່າຍໜຶ່ງ... ຊຶ່ງຜົນກະທົບມາເຖິງການ ຈັດຕັ້ງພວກເຮົາ, ສ່ວນໜຶ່ງກໍຍ້ອນພວກເຮົາຍັງບໍ່ທັນໄດ້ເອົາໃຈໃສ່ບັນຫານີ້, ຍັງຖືເບົາວ່າບໍ່ສຳຄັນ ປະປ່ອຍໄປ ຕາມເຈດຕະນາລົມຂອງພະນັກງານ ຈຶ່ງເກີດມີທາງສຽງວິພາກວິຈານວ່າ

ພະນັກງານປະຕິບັດຄຳຕັດສິນ ຮັບສິນບົນ, ບໍ່ມີຄວາມຊື່ສັດ, ເຂົ້າຂ້າງອອກຂາ... ຄຳເວົ້າດັ່ງກ່າວກໍອອກມາຈາກການເວົ້າຈາ ແລະການປະພຶດ ທີ່ບໍ່ຊອບມາພາຄວນຂອງພວກເຮົາເອງທັງໝົດ[8].

15) ການຮັບຟັງການສະເໜີຄຳຄິດຄຳເຫັນຂອງຄູ່ຄວາມ ແລະ ພາກສ່ວນທີ່ກ່ຽວຂ້ອງທຸກຝ່າຍ

ການຮັບຟັງການປະກອບຄຳຄິດຄຳເຫັນຂອງເພື່ອນສະຫາຍ, ການຮັບຟັງການຮ້ອງຂໍ ການສະເໜີຂອງ ຄູ່ຄວາມ ແລະ ການຈັດຕັ້ງທີ່ກ່ຽວຂ້ອງເປັນອັນປະເສີດ ເພື່ອນຳມາປະດັບຄວາມຮູ້ ຄວາມເຂົ້າໃຈຂອງຕົນ ຕໍ່ບັນຫານັ້ນໆ ໃຫ້ມີຄວາມກະຈ່າງແຈ້ງຂຶ້ນໃນການພິຈາລະນາແຕ່ລະຄັ້ງ, ເພາະວ່າທຸກສິ່ງທຸກຢ່າງແຕ່ລະຄົນ ບໍ່ສາມາດຮອບຮູ້ໄດ້ທຸກເລື່ອງ ຕ້ອງອາໃສຂໍ້ມູນ ຂ່າວສານຈາກພາຍນອກມາປະກອບຕື່ມອີກ ການຮັບຟັງນັ້ນ ຕ້ອງຮັບຟັງດ້ວຍຄວາມຕັ້ງໃຈ ຫຼື ບັນທຶກໄວ້ຍິ່ງເປັນການດີ ໂດຍສະເພາະແມ່ນຄູ່ຄວາມມາສະເໜີບັນຫາໃດ ໜຶ່ງຕໍ່ພະນັກງານປະຕິບັດ, ການຮັບຟັງດ້ວຍຄວາມຕັ້ງໃຈນັ້ນ ບໍ່ໄດ້ໝາຍຄວາມວ່າ ພວກເຮົາຈະປະຕິບັດຕາມນັ້ນ, ການຮັບຟັງຄຳຄິດເຫັນຂອງເຂົາເຈົ້າໄດ້ດີເທົ່າໃດແມ່ນພວກເຮົາສາມາດເຂົ້າໄປເຖິງເນື້ອໃນ ຈິດໃຈ ຂອງເຂົາເຈົ້າຈຶ່ງເຮັດໃຫ້ເຂົາເຈົ້າມີຄວາມເຊື່ອໝັ້ນ ແລະ ມີຄວາມໄວ້ວາງໃນຕົວຂອງພະນັກງານ.

16) ການມີມະນຸດສະທຳ

ການປະຕິບັດຄຳຕັດສິນຂອງສານເປັນເລື່ອງເດັດຂາດຢ່າງມີຫຼັກການ ແລະ ຂັ້ນຕອນທີ່ກຳນົດ ໄວ້ໃນກົດໝາຍຄັກແນ່. ດັ່ງນັ້ນ, ການມີມະນຸດສະທຳໃນທີ່ນີ້ບໍ່ໝາຍຄວາມວ່າ ການອ່ອນແອຂອງພະນັກງານປະຕິບັດ, ບໍ່ໄດ້ໝາຍເຖິງຄວາມບໍ່ສັກສິດຂອງກົດໝາຍ ແລະ ບໍ່ແມ່ນການເມດຕາສົງສານຕໍ່ຜູ້ຖືກປະຕິບັດຄຳຕັດສິນຂອງສານແຕ່ຢ່າງໃດ, ການມີມະນຸດສະທຳແມ່ນການປະຕິບັດນະໂຍບາຍຍຸຕິທຳຂອງພັກ, ໂດຍມີການຜ່ອນສັ້ນ ຜ່ອນຍາວຕໍ່ຄູ່ຄວາມທຸກຝ່າຍ ບໍ່ໜັກຝ່າຍໃດ ຝ່າຍໜຶ່ງ, ສິ່ງທີ່ສຳຄັນໃນແນວທາງຍຸຕິທຳ ຂອງພັກແມ່ນການສຶກສາອົບຮົມໃຫ້ທຸກຝ່າຍຍອມຮັບຊຶ່ງກັນ ແລະ ກັນ, ມີທັງຄວາມສາມັກຄີ, ມີທັງຄວາມສະຫງົບສຸກ ແລະ ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ.

**References:**


1. ກົດໝາຍວ່າດ້ວຍ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ສະບັບເລກທີ 4/ສພຊ, ລົງວັນທີ 25 ກໍລະກົດ 2008
2. ທ່ານ ບຸນຕາ ສ.ພາບມີໄຊ, ປຶ້ມຄູ່ມືກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ປີ 2011.


[8] ທ່ານ ບຸນຕາ ສ.ພາບມີໄຊ, ປຶ້ມຄູ່ມືກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ປີ 2011, ໜ້າ 14.